# ຂໍ້ມູນກ່ຽວກັບສິດຂອງຊາວອົບພະຍົບ

ກຸມພາ 2001

I. ຄົນຕ່າງຊາດອາດມີເງື່ອນໄຂພຽງພໍທີ່ຈະໄດ້ຮັບ **ການຊ່ວຍເຫຼືອ ດ້ານເງິນສົດ, ການດູແລເດັກ, ການປິ່ນປົວ (ການຊ່ວຍເຫຼືອດ້ານການປິ່ນປົວ ແລະ ສຸຂະພາບ)** ຖ້າຫາກພວກເຂົາ:

ຢູ່ສະຫະຣັຖມາຕັ້ງແຕ່ສິງຫາ 22, 1996 ແລະມີເງື່ອນໄຂດັ່ງລຸ່ມນີ້:

- ເປັນຜູ້ທີອາໃສຢູ່ຖາວອນຢ່າງຖືກກົດໝາຍ
- ເປັນຜູ້ລີ້ໄພ
- ເປັນຜູ້ໄດ້ຮັບການຄຸ້ມຄອງ
- ຜູ້ທີ່ຖືກລະງັບການເນລະເທດ
- ໄດ້ຮັບທັນບົນ
- ໄດ້ຮັບເງື່ອນໄຂພິເສດ ໃນການໄດ້ສະຖານະ
- ເປັນທະຫານຜ່ານສຶກກຽດຕິຍົດ ຫຼື ທ້າວທັນໃນໜ້າທີ່ໃນກອງທັບ ສະຫະຣັຖ (ລວມທັ້ງຄູ່ຄອງ ແລະ ລູກທີ່ບໍ່ທັນແຕ່ງງານຂອງຄົນຕ່າງຊາດນັ້ນດ້ວຍ).
- ຊາວອົບພະຍົບຈາກ ຄິວບາ ຫຼື ຣາຕີ ຫຼື ຜູ້ທີ່ສະມັກເປັນຊາວອົບພະຍົບອາເມລິກາອາຊີ

ເຂົ້າມາສະຫະຣັຖຫຼັງສິງຫາ 22, 1996 ແລະມີເງື່ອນໄຂດັ່ງລຸ່ມນີ້:

- ເປັນຜູ້ລີ້ໄພ
- ເປັນຜູ້ໄດ້ຮັບການຄຸ້ມຄອງ
- ຜູ້ທີ່ຖືກລະງັບການເນລະເທດ
- ເປັນທະຫານຜ່ານສຶກກຽດຕິຍົດ ຫຼື ທ້າວທັນໃນໜ້າທີ່ໃນກອງທັບ ສະຫະຣັຖ
- ເປັນຊາວຕ່າງຊາດທີ່ຢູ່ຖາວອນຢ່າງຖືກກົດໝາຍ ແລະ ຊາວຕ່າງຊາດທີ່ຢູ່ໃນທັນບົນລວມທັງຊາວອົບພະຍົບທີ່ຖືກທຳຮ້າຍ ແລະ ລູກຂອງເຂົາເຈົ້າບໍ່ມີສິດໄດ້ຮັບການຊ່ວຍເຫຼືອເປັນເວລາ 5 ປີນັບຈາກມື້ທີ່ເຂົ້າມາສະຫະຣັຖ. ດັ່ງນັ້ນພວກເຂົາຕ້ອງມີເງື່ອນການອານຸຍາດຕາມສະພາບຂອງຊາວຕ່າງຊາດເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອນີ້.

ຊາວຕ່າງຊາດຜູ້ອື່ນທີ່ບໍ່ມີເງື່ອນໄຂທີ່ກ່າວມານັ້ນຈະບໍ່ມີສິດໄດ້ຮັບການຊ່ວຍເຫຼືອເປັນເງິນສົດ, ດູແລເດັກ, ແລະການຮັກສາ ແຕ່ອາດຈະມີສິດໄດ້ຮັບການຊ່ວຍເຫຼືອໃນການຮັກສາໃນກໍລະນີສຸກເສີນ.

II. ຊາວຕ່າງຊາດມີເງື່ອນໄຂທີ່ຈະຮວມໃນໂຄງການ **ບັດອາຫານ** ຕາມເງື່ອນໄຂລຸ່ມນີ້:

A. ຊາວຕ່າງຊາດຕາມເງື່ອນໄຂລຸ່ມນີ້ສາມາດໄດ້ຮັບການຊ່ວຍເຫຼືອບັດອາຫານພຽງແຕ່ 7 ປີ ເທົ່ານັ້ນ:

- ເປັນຜູ້ລີ້ໄດ
- ຜູ້ໄດ້ຮັບການຄຸ້ມຄອງ
- ຊາວຕ່າງຊາດທີ່ຖືກລະງັບການເນລະເທດ
- ເປັນຊາວຄິວບາ ແລະ ຮາຕິ
- ສະມັກເປັນຊາວອົບພະຍົບອາເມລິກາອາຊີ

B. ເປັນຜູ້ທີ່ຢູ່ຖາວອນຢ່າງຖືກກົດໝາຍທີ່ທີ່ເຮັດວຽກຮອດ 40 ໄຕມາດ (ປະມານ 10 ປີ) ຫຼື ຫຼາຍກວ່າໃນສະຫະຣັຖ ຫຼື ຜູ້ທີ່ໄດ້ຮັບການຊ່ວຍເຫຼືອຜູ້ຕາບອດ ຫຼື ພິການ ແລະ ອາຍຸ 65 ປີ ຫຼື ຫຼາຍກວ່າໃນເດືອນສິງຫາ 22, 1996, ຫຼື ອາຍຸຕ່ຳກວ່າ 18 ປີ.

C. ຊາວຕ່າງຊາດທີ່ຢູ່ສະຫະຣັຖຢ່າງຖືກກົໝາຍ ຫຼື ເປັນທະຫານຜ່ານສຶກກຽດຕິຍົດ ຫຼື ທ້າວຫັນໃນການເຮັດວຽກໃນກອງທັບອາເມລິກາ. ເຊິ່ງລວມທັ້ງຄູ່ຄອງ ຫຼືລູກທີ່ບໍ່ທັນແຕ່ງງານທີ່ຊາວຕ່າງຊາດຕ້ອງດູແລ.

III. ຊາວຕ່າງຊາດດັ່ງລຸ່ມນີ້ມີສິດໄດ້ຮັບການຊ່ວຍເຫຼືອຕາມເວລາທີ່ກຳໜົດ :

A. ການຊ່ວຍເຫຼືອບັດອາຫານແລະການຮັກສາ:

- ຊາວອາເມລິກາອິນເດີຍແດງທີ່ເກີດໃນການາດາ

B. ການຊ່ວຍເຫຼືອບັດອາຫານ:

- ສະມາຊິກຊົນເຜົ່າມົ້ງ ຫຼື ລາວທີ່ໄດ້ຊ່ວຍຊາວອາເມລິກາໃນລະຫວ່າງສົງຄາມຫວຽດນາມ.

ຊາວຕ່າງຊາດທີ່ບໍ່ມີເງື່ອນໄຂທີ່ກ່າວມານັ້ນຈະບໍ່ມີສິດຮັບການຊ່ວຍເຫຼືອບັດອາຫານ.

ສຳຫຼັບການບໍລິການອື່ນໆ ຫຼື ຕ້ອງການຫາຫ້ອງການໃຫ້ບໍລິການດ້ານສັງຄົມ ແລະ ການຟື້ນຟູທີ່ໃກ້ບ້ານທ່ານ ໃຫ້ໃຊ້ລີ້ງໃນທ້າຍ ເພຈນີ້.

ປັບປຸງ: ກັນຍາ 16, 2004